# ໂຮງຮຽນວັນອາທິດ

## ວັນອາທິດ ທີ 03 ເດືອນກໍຣະກະດາ 2022 (07-03-2022 )

## ເອກຣາດເຊິ່ງກັນແລະກັນ

*ສິ່ງໃດທີ່ທ່ານເຫັນວ່າເປັນປໂຍດຫຼາຍທີ່ສຸດກ່ຽວກັບສະມາດໂຟນ?*

**ຈຸດສໍາຄັນໃນບົດຮຽນ:** ໃຫ້ຄວາມຮັບຜິດຊອບຂອງທ່ານຕໍ່ຄົນອື່ນໆຂັບເຄື່ອນວິທີທີ່ທ່ານໃຊ້ສິດທິຂອງທ່ານ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າມີຄວາມສາລະພາບ. ມື້ນຶ່ງໃນຂນະທີ່ຂ້າພະເຈົ້າຂັບລົດຢູ່, ຂ້າພະເຈົ້າໄດ້ຮັບຂໍ້ຄວາມທີ່ສົ່ງເຂົ້າມາ. ຂ້າພະເຈົ້າຮູ້ວ່າເຮົາບໍ່ຄວນສົ່ງຂໍ້ຄວາມໃນຂນະທີ່ກໍາລັງຂັບຣົດຢູ່, ແຕ່ໃນເວລານີ້, ຂ້າພະເຈົ້າອ່ານເບິ່ງຂໍ້ຄວາມທີ່ສົ່ງມາແລະສົ່ງຂໍ້ຄວາມກັບໄປ, ແມ່ນແລ້ວ, ຂ້າພະເຈົ້າຍັງຂັບຣົດຢູ່-ແລະຣົດຂ້າພະເຈົ້າໄດ້ເຄື່ອນເຂົ້າໄປອີກແຖວອື່ນ! ຂ້າພະເຈົ້າບໍ່ໄດ້ໄປຕໍາຣົດຄັນອື່ນໆ, ແຕ່ມັນກໍເກືອບຕໍາ, ຖ້າຣົດຂ້າພະເຈົ້າໄປຕໍາຣົດຄົນອື່ນ, ມັນອາດຈະເຮັດໃຫ້ເກີດອຸປະຕິເຫດທີ່ຮ້າຍແຮງ-ບາງທີອາດເປັນອັນຕຣາຍແກ່ຊີວິດເຖິງຕາຍໄດ້-ເປັນຜົນສະທ້ອນທີ່ຮ້າຍແຮງສໍາລັບພວກເຮົາທັງສອງຝ່າຍ.

ວິທີທີ່ພວກເຮົາດໍາເນີນຊີວິດສາມາດສົ່ງຜົນກະທົບຕໍ່ຄົນທີ່ຢູ່ອ້ອມຂ້າງເຮົາໄດ້. ຈະເປັນແນວໃດຖ້າພວກເຮົາດໍາເນີນຊີວິດຂອງພວກເຮົາໃນແບບທີ່ພວກເຮົາບໍ່ໄດ້ເຂົ້າໄປໃນເສັ້ນທາງອື່ນ, ແລະເຮັດໃຫ້ເກີດບັນຫາກັບຄົນທີ່ຢູ່ອ້ອມຂ້າງພວກເຮົາ? ຈະເປັນແນວໃດຖ້າເຮົາຢູ່ໃນແບບທີ່ເຮົາ "ຢູ່ໃນເສັ້ນທາງຂອງເຮົາສເມີ" ແລະການເຮັດແບບນັ້ນ ເຮົາຍອມໃຫ້ຄົນອື່ນທີ່ຢູ່ອ້ອມຮອບເຮົາໄປເຖິງຈຸດໝາຍປາຍທາງໂດຍບໍ່ມີການແຊກແຊງຈາກເຮົາ?

ອັຄສາວົກໂປໂລໄດ້ເວົ້າເຖິງວິທີທີ່ເຮົາຈະດໍາເນີນຊີວິດແບບນີ້. ນີ້ແມ່ນວິທີທີ່ດີກ່ວາທີ່ຈະດໍາເນີນຊີວິດ, ແລະມັນຈະນໍາພາເຮົາໃຫ້ສນັບສນູນຄົນອື່ນແລະໃຫ້ກຽດແກ່ພຣະຄຣິດ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

### 1. 1 ໂກຣິນໂທ 10:23-24

*23 "ເຮົາເຮັດສິ່ງສາລະພັດໄດ້ ບໍ່ມີໃຜຫ້າມ" ແຕ່ບໍ່ແມ່ນທຸກສິ່ງທີ່ເຮັດໄດ້ນັ້ນເປັນປໂຍດ "ເຮົາເຮັດສິ່ງສາລະພັດໄດ້ ບໍ່ມີໃຜຫ້າມ" ແຕ່ບໍ່ແມ່ນທຸກສິ່ງທີ່ເຮັດໄດ້ນັ້ນຈະໃຫ້ຈະເລີນຂຶ້ນ. 24 ຢ່າໃຫ້ຜູ້ໃດຫາປໂຍດສ່ວນຕົວ ແຕ່ຈົ່ງເຫັນແກ່ປໂຍດຂອງຄົນອື່ນ.*

ດັ່ງທີ່ໂປໂລໄດ້ຂຽນຈົດໝາຍໄປເຖິງຄຣິສຈັກໃນເມືອງໂກຣິນໂທ, ທ່ານໃຊ້ພາສາທີ່ພວກເຂົາຄຸ້ນເຄີຍ. "ທຸກສິ່ງທຸກຢ່າງແມ່ນເຮັດໄດ້" ແມ່ນສິ່ງທີ່ຄົນທັງຫຼາຍຈະໄດ້ຍິນຢູ່ຕາມຖນົນຫົນທາງຂອງເມືອງໂກຣິນໂທ. ມັນແມ່ນທາງສ່ວນນຶ່ງຂອງຊາວໂກຣິນໂທ, ເມືອງໂກຣິນໂທຕັ້ງຢູ່ໃນປະເທດ ກຣີກ, ແລະເປັນເມືອງທ່າເຮືອທີ່ສໍາຄັນ, ມັນເປັນຊ່ອງທາງໃຫ້ແກ່ຫຼາຍໆຄົນສໍາລັບ, ມຸມມອງຕ່າງໆ, ແລະການປະພຶດການບາບຊົ່ວຊ້າ. ໃນຂນະທີ່ເປັນຊ່ອງທາງສໍາລັບບາບນາໆຊະນິດ, ດັ່ງນັ້ນຄວາມບາບທຸກໆຢ່າງສາມາດແພ່ຜາຍເຂົ້າມາເຖິງໄດ້ງ່າຍສໍາລັບເມືອງນີ້. ທັດສະນະຄະຕິຂອງຄົນສ່ວຍຫຼາຍ, ແມ່ນພວກເຂົາສາມາດເຮັດຫັຽງກໍໄດ້ເພາະວ່າທຸກສິ່ງກໍມີພ້ອມຢູ່ແລ້ວ.

ທ່ານໂປໂລຍອມຮັບວ່າ, ແມ່ນແທ້, ເຂົາສາມາດເຮັດໄດ້ທຸກສິ່ງທຸກຢ່າງ, ແຕ່ບໍ່ແມ່ນທຸກສິ່ງທຸກຢ່າງທີ່ເຂົາເຮັດນັ້ນຈະຊ່ວຍໃຫ້ເຂົາໃນການດໍາເນີນຊີວິດ. ສິ່ງນີ້ມັນເປັນຈິງສໍາລັບພວກເຮົາເໝືອນກັນ. ບາງສິ່ງບາງຢ່າງທີ່ພວກເຮົາສາມາດເຮັດໄດ້ນັ້ນຈະບໍ່ໄດ້ນໍາຊີວິດມາສູ່ພວກເຮົາ; ແທນທີ, ພວກມັນຈະນໍາໄປໃຫ້ມີອິດສຣະທີ່ແທ້ຈິງແຕ່ກັບນໍາເຂົາໃຫ້ໄປເປັນທາດຂອງມັນ. "ບໍ່ແມ່ນທຸກສິ່ງທຸກຢ່າງເປັນປໂຍດ "ຫຼື" ສ້າງປໂຍດ,"

ເຮົາຕ້ອງເຮັດສິ່ງທີ່ເປັນປໂຍດຕໍ່ຄົນອື່ນໆ. ທ່ານໂປໂລໄດ້ເວົ້າກັບຄຣິສຕະຈັກໃນເມືອງໂກຣິນໂທກ່ຽວກັບການຊອກຫາ "ຜົນປໂຍດຂອງຕົນເອງ, ແຕ່ໃຫ້ເຫັນແກ່ປໂຍດຂອງຄົນອື່ນ." ຄົນສ່ວນຫຼາຍມັກຈະຄິດເຖິງຕົນເອງກ່ອນທີ່ຈະຄິດເຖິງເຣື່ອງຂອງຄົນອື່ນໆ, ໂປໂລໄດ້ເຕືອນຄຣິສຕະຈັກວ່າ ອານາຈັກຂອງພຣະເຈົ້ານັ້ນແຕກຕ່າງຈາກອານາຈັກຂອງໂລກນີ້. ໃນຣາຊອານາຈັກຂອງພຣະເຈົ້ານັ້ນເຮົາຄິດເຖິງຜົນປໂຍດຂອງຄົນອື່ນຫຼາຍກ່ວາຂອງຕົນເອງ. ເຣື່ອງນີ້ບໍ່ແມ່ນວິທີທາງປົກກະຕິສຳລັບພວກເຮົາ. ປົກກະຕິແລ້ວພວກເຮົາຈະຄິດເຖິງຕົວເອງກ່ອນ. ພວກເຮົາຕ້ອງການທີ່ຈະເຮັດຕາມຈິດໃຈຂອງຕົນເອງ. ແຕ່ໂປໂລໄດ້ຮຽກຮ້ອງໃຫ້ພວກເຮົາໄດ້ຖ່ອມຕົວລົງແລະແລ້ວສຸມໃຈໃສ່ຜົນປໂຍດຂອງ "ພວກເຮົາ" ບໍ່ແມ່ນ "ຕົວເອງ."

*ການສຸມໃຈໃສ່ຣາຊອານາຈັກມັນປ່ຽນທາງການໃຊ້ສິດທິຂອງພວກເຮົາແນວໃດ?*

ພວກເຮົາຕ້ອງເບິ່ງທຸກສິ່ງຜ່ານທາງທັດສະນະສາຍຕາແບບໃໝ່. ມັນຄືກັບວ່າຖ້າພວກເຮົາກຳລັງເບິ່ງໂລກດ້ວຍສາຍຕາທີ່ບໍ່ສົມບູນກ່ວາ. ໃນເວລາທີ່ພວກເຮົາສວມໃສ່ແວ່ນຕາຂອງອານາຈັກຂອງພຣະເຈົ້າ, ຈຸດສຸມຂອງພວກເຮົາປ່ຽນແປງ. ບາງຄັ້ງ "ດີ" ບໍ່ພຽງແຕ່ເວົ້າວ່າບໍ່ກັບສິ່ງເປັນຄວາມບາບ. ແນ່ນອນວ່ານັ້ນຄືສິ່ງສຳຄັນ, ແຕ່ພວກເຮົາຍັງອາດຈຳເປັນຕ້ອງເວົ້າວ່າບໍ່ມີບາງສິ່ງທີ່ດີເພື່ອເວົ້າກັບບາງສິ່ງບາງຢ່າງທີ່ດີກ່ວາ; ການຊ່ວຍເຫຼືອອ້າຍເອື້ອຍນ້ອງຂອງພວກເຮົາໃນພຣະຄຣິດ. ຢ່າວາງກັບດັກໃສ່ກັບຊີວິດແລະການເລືອກຂອງພວກເຮົາ. ພວກເຮົາໄດ້ປະຖິ້ມສິດທິຂອງພວກເຮົາ-ທີ່ອະນຸຍາດໄດ້-ສຳລັບຂອງອື່ນໆ. ນີ້ແມ່ນການປ່ຽນແປງແຜນທີ່ແນ່ນອນ, ຕໍ່ເມື່ອພວກເຮົາຍອມຈຳນົນຕໍ່ພຣະເຢຊູ, ເຮົາໄດ້ປະຖິ້ມມາດຕະຖານຂອງໂລກເພື່ອຕ້ອນຮັບເອົາອານາຈັກໃໝ່.

## 2. 1 ໂກຣິນໂທ 10:25-30

*25 ຊີ້ນທຸກຢ່າງທີ່ເຂົາຂາຍຕາມຕລາດນັ້ນກິນໄດ້ໂດຍບໍ່ຕ້ອງຖາມສິ່ງໃດ ເພາະເຫັນແກ່ໃຈສຳນຶກຜິດແລະຊອບ. 26 ດ້ວຍວ່າ, "ແຜ່ນດິນໂລກກັບສັບພະສິ່ງໃນໂລກນັ້ນເປັນຂອງອົງພຣະຜູ້ເປັນເຈົ້າ." 27 ຖ້າຄົນທີ່ບໍ່ມີຄວາມເຊື່ອເຊີນເຈົ້າໄປກິນລ້ຽງແລະເຈົ້າກໍເຕັມໃຈໄປສິ່ງໃດທີ່ເຂົາຈັດໃຫ້ກິນກໍກິນໄດ້ ບໍ່ຕ້ອງຖາມສິ່ງໃດ ເພາະເຫັນແກ່ໃຈສຳນຶກຜິດແລະຊອບ. 28 ແຕ່ຖ້າມີຜູ້ໃດບອກເຈົ້າວ່າ, "ຂອງນີ້ເຂົາໄດ້ເອົາບູຊາແລ້ວ" ເຈົ້າຢ່າໄດ້ກິນເພາະເຫັນແກ່ຜູ້ທີ່ບອກນັ້ນ ແລະເພາະເຫັນແກ່ໃຈສຳນຶກຜິດແລະຊອບ. 29 (ເຮົາບໍ່ໄດ້ໝາຍເຖິງໃຈສຳນຶກຜິດແລະຊອບຂອງເຈົ້າ ແຕ່ໝາຍເຖິງໃຈສຳ-ນຶກຜິດແລະຊອບຂອງຄົນທີ່ບອກນັ້ນ). "ເປັນຫຍັງໃຈສຳນຶກຜິດແລະຊອບຂອງຄົນອື່ນ ຈະຕ້ອງມາຂັດຂວາງເສລີ-ພາບຂອງເຮົາ. 30 ຖ້າເຮົາຮັບປະທານໂດຍຂອບພຣະຄຸນ ເປັນຫຍັງເຂົາຈິ່ງຕິຕຽນເຮົາເພາະສິ່ງທີ່ເຮົາໄດ້ຂອບພຣະຄຸນແລ້ວ."*

ຢ່າເປັນສາຍເຫດເຮັດໃຫ້ຄົນອື່ນຄັດເຄືອງໃຈໂດຍບໍ່ຈຳເປັນ. ຟັງແລ້ວຄືວ່າສົມຄວນ, ແຕ່ຖ້າຫາກວ່າບໍ່ໄດ້ເຮັດໂດຍເຈດຕະນາ, ພວກເຮົາອາດເຮັດໃຫ້ຄົນອື່ນຜິດຫັວງໂດຍທີ່ບໍ່ໄດ້ຕັ້ງໃຈ. ໂປໂລໄດ້ຕັ້ງໃຈໃສ່ໃນເຣື່ອງການເຫັນແກ່ຜົນປໂຍດຂອງຄົນອື່ນມາກ່ອນຂອງຕົວເອງ, ແລະໃນຕອນນີ້ທ່ານກໍໄດ້ເຮັດເປັນຕົວຢ່າງທີ່ສາມາດເຮັດຕາມໄດ້, ຜູ້ເຊື່ອຊາວໂກຣິນໂທອາດມີປະສົບປະການນີ້. ຊາວຢິວໃນເມືອງໂກຣິນໂທອາດມີຄວາມຄຸ້ນເຄີຍກັບຂໍ້ບັນຍັດທີ່ວາງໄວ້ໃນພວກເຂົາກ່ຽວກັບສິ່ງທີ່ພວກເຂົາກິນໄດ້ຫຼືກິນບໍ່ໄດ້ໃນພຣະສັນຍາໃໝ່ໃນພຣະຄຣິດ, ຂໍ້ຈຳກັດເຫຼົ່ານັ້ນບໍ່ມີຕໍ່ໄປອີກແລ້ວ. (ມາຣະໂກ 7:18-19; ໂຣມ 14:1), ແລະພວກເຂົາມີອິດສຣະທີ່ຈະ "ກິນທຸກສິ່ງທຸກຢ່າງທີ່ຂາຍໃນຕລາດ". "ເຂົາມີອິດສຣະທີ່ຈະກິນອາຫານທັງໝົດເພາະພຣະຜູ້ເປັນເຈົ້າຊົງສຳລະແລ້ວ, ເຣື່ອງນີ້ເປັນເຣື່ອງໃຫ່ຍທີ່ສຳຄັນສຳລັບຜູ້ທີ່ນຳໃຊ້ກົດບັນຍັດກ່ຽວກັບການກິນການດື່ມຂອງຊາວຢິວ. ຕອນນີ້ໂປໂລໄດ້ເອົາອິດສຣະພາບນີ້ແລະວາງໄວ້ໃນພື້ນຖານຂອງຄຳເຊື້ອເຊີນ. ຖ້າຫາກວ່າເປັນສິດທີ່ເຕັມໃຈທີ່ຈະໄປແລະກິນອາຫານທີ່ຈັດຕຽມໄວ້ນັ້ນ. ຫຼັງຈາກນັ້ນ, ມັນອາດເປັນໂອກາດສຳລັບທ່ານທີ່ຈະນຳເຂົ້າມາເປັນສ່ວນນຶ່ງໃນພຣະຜູ້ໄຖ່ຂອງທ່ານ. ແຕ່ຈົ່ງຈື່ໄວ້ວ່າຄົນທີ່ບໍ່ຮູ້ຈັກພຣະເຢຊູຈະປະພຶດແບບນັ້ນ. ໂປໂລໄດ້ກ່າວເຖິງເຣື່ອງນີ້ວ່າອາຫານທີ່ຊາວໂກຣິນໂທທີ່ບໍ່ເຊື່ອອາດຈະບໍ່ໃຊ້ລວມກັບອາຫານທີ່ເປັນເຄື່ອງຖວາຍບູຊາຂອງຄົນທີ່ບໍ່ເຊື່ອ. ອັນນີ້ບໍ່ແມ່ນບັນຫາທີ່ຜູ້ເຊື່ອຕ້ອງຖືວ່າຈຳເປັນຕ້ອງເຮັດ. ພຽງແຕ່ທ່ານນັ່ງຢູ່ໃກ້ແລະມີຄວາມສຸກກັບອາຫານກັບເພື່ອນຂອງທ່ານ. ຢ່າງໃດກໍ່ຕາມ, ຖ້າຜູ້ໃດຜູ້ນຶ່ງປະກາດວ່າອາຫານທີ່ນຳມານັ້ນເປັນສ່ວນນຶ່ງຂອງເຄື່ອງບູຊາ, ເຣື່ອງທັງໝົດນັ້ນຈະປ່ຽນແປງ. ໃນຕົວມັນເອງຂອງອາຫານບໍ່ມີຫັຍງຜິດ, ແຕ່ຜູ້ທີ່ມີຄວາມເຊື່ອຄວນລະເວັ້ນເພື່ອເຫັນແກ່ຄວາມຮັບຜິດຊອບຂອງຈິດສຳນຶກຂອງຄົນອື່ນ. ບາງຄົນອາດຈະຕໍ່ວ່າຄຣິສ

ຕຽນສາມາດ "ລະບຸຊື່ໄດ້" ໂດຍການກິນຊີ້ນຢ່າງໃດກໍໄດ້, ຂໍໃຫ້ເປັນຊີ້ນ. ແນວໃດກໍຕາມ, ໂດຍການທີ່ເຮັດຢ່າງນັ້ນຄຣິສຕຽນອາດຈະສົ່ງການເປັນພະຍານວ່າການນະມັສການຮູບປັ້ນເປັນເລື່ອງທີ່ຖືກຕ້ອງ. ໂດຍການກິນ, ຄຣິສຕຽນສາມາດຊ່ວຍຊຸກຍູ້ໜູນໃຈຄົນອື່ນໆໄດ້ວ່າເປັນການບໍ່ເໝາະສົມທີ່ຈະນະມັສການຮູບປັ້ນ. ຫຼືຜູ້ທີ່ເຊື່ອນຳກັນ, ສົມມຸດວ່າຄຣິສຕຽນບໍ່ກິນຊີ້ນດັ່ງກ່າວ, ຈະເບິ່ງຜູ້ເຊື່ອຄົນອື່ນເປັນຄົນໜ້າຊື່ໃຈຄົດ, ເຮັດໃຫ້ເກີດອຸປະສັກຕໍ່ຜູ້ທີ່ບໍ່ເຊື່ອທີ່ຢາກຈະມາຫາພຣະຄຣິດ. ດັ່ງນັ້ນອີກເທື່ອນຶ່ງ, ໃນຂນະທີ່ "ທຸກສິ່ງທຸກຢ່າງບໍ່ມີຂໍ້ຫ້າມ" (ຂໍ້ 23), ຜູ້ທີ່ເຊື່ອກໍຄວນລະມັດລະວັງເພື່ອຫຼີກເວັ້ນການຫຼອກລວງຄົນອື່ນ. ພວກເຮົາອາດຕ້ອງຈັດລະບຽບເສລີພາບຂອງພວກເຮົາໃຫ້ດີເພື່ອຫຼີກລ້ຽງການເປັນສິ່ງກີດຂວາງ. ພວກເຮົາອາດມີ "ສິດ" ທີ່ຈະກິນ, ແຕ່ເຮົາກໍມີຄວາມຮັບຜິດຊອບທີ່ຈະຮັກຄົນອື່ນ. ການກະທຳຂອງພວກເຮົາສົ່ງຜົນກະທົບຕໍ່ການເຕີບໃຫ່ຍຂອງຜູ້ເຊື່ອໃໝ່ ຫຼືຄວາມກ້າວໜ້າຂອງຄົນທີ່ມາຫາພຣະຄຣິດ. ການເລືອກບໍ່ໄດ້ກ່ຽວກັບກັບຄວາມດີຫຼືຄວາມເຊື່ອສເມີໄປ, ແຕ່ມັນກ່ຽວກັບສິ່ງທີ່ດີທີ່ສຸດ. ຫຼັກການທີ່ໂປໂລໄດ້ກ່າວໄວ້ໃນທີ່ນີ້ເປັນແຜນທີ່ການນຳທາງເພື່ອການເດີນທາງ. ເມື່ອພວກເຮົາແນມເບິ່ງພຣະເຢຊູ, ພວກເຮົາຈະໄດ້ເຫັນແຜນທີ່ທາງເດີນນັ້ນ. ພວກເຮົາຈະບໍ່ເຮັດຜິດໂດຍເຈດຕະນາ. ພວກເຮົາຈະສະທ້ອນໃຫ້ເຫັນເຖິງຄວາມຮັກຂອງພຣະຄຣິດ.

*ເຮົາຈະຕັດສິນໃຈແນວໃດວ່າແງ່ມຸມໃດຂອງຄວາມເຊື່ອຂອງເຮົາເປັນເລື່ອງຂອງຄວາມສຳນຶກຜິດແລະຊອບ?*

**3. 1 ໂກຣິນໂທ 10:31-33**

*31 ເຫດສັນນັ້ນເມື່ອເຈົ້າທັງຫຼາຍຈະກິນ, ຈະດື່ມ, ຫຼືຈະເຮັດສິ່ງໃດກໍດີ ຈົ່ງເຮັດທຸກສິ່ງເພື່ອຖວາຍພຣະກຽດແດ່ພຣະເຈົ້າ. 32 ຢ່າເປັນຕົ້ນເຫດທີ່ເຮັດໃຫ້ພວກຢິວ, ພວກຕ່າງຊາດ, ຫຼືຄຣິສຕະຈັກຂອງພຣະເຈົ້າສະດຸດໃຈ. 33 ເໝືອນດັ່ງເຮົາເອງເຄີຍເຮັດທຸກຢ່າງໃຫ້ເປັນທີ່ພໍໃຈຄົນທັງປວງ ໂດຍບໍ່ເຫັນແກ່ປໂຍດສ່ວນຕົວ ແຕ່ເຫັນແກ່ປໂຍດຂອງຄົນທັງຫຼາຍ ເພື່ອເຂົາຈະໄດ້ພົ້ນ.*

ສິ່ງທີ່ໂປໂລໄດ້ເວົ້າກັບຄຣິສຈັກໃນເມືອງໂກຣິນໂທສາມາດສະຫຼຸບໄດ້ວ່າ: ຈົ່ງເຮັດໃນສິ່ງທີ່ເປັນພະຍານຕໍ່ພຣະຄຣິດ. ເມື່ອໂປໂລຂຽນວ່າ, "ດັ່ງນັ້ນ, ບໍ່ວ່າທ່ານຈະກິນຫຼືດື່ມ, ຫຼືເຮັດອັນໃດກໍ່ຕາມ, ຈົ່ງເຮັດທຸກສິ່ງເພື່ອຖວາຍກຽດແດ່ພຣະເຈົ້າ," ເພິ່ນໄດ້ຊຸກຍູ້ຄຣິສຕະຈັກເມືອງໂກຣິນໂທແລະຄຣິສຕະຈັກໃນທຸກວັນນີ້ເພື່ອໃຫ້ທຸກໆດ້ານຂອງຊີວິດຂອງພວກເຮົາໃຫ້ເປັນທີ່ຖວາຍກຽດແກ່ພຣະເຢຊູ. ໂປໂລບໍ່ໄດ້ພະຍາຍາມເຮັດໃຫ້ພວກເຮົາຮູ້ສຶກອ່ອນເພຶ້ງແຕ່ໃຫ້ກຳລັງໃຈກັບພວກເຮົາ. ທຸກໆສິ່ງທີ່ທ່ານດຳເນີນຊີວິດຢູ່ແລະກຳລັງເຮັດຢູ່, ໃຫ້ແນ່ໃຈວ່າທ່ານໃສ່ແກ້ວຕາຂອງທ່ານຝ່າຍອານາຈັກພຣະເຈົ້າຢູ່.

*ສະງ່າຣາສີຂອງພຣະເຈົ້າເປັນເຄື່ອງກັ່ນຕອງສຳລັບການດຳເນີນຊີວິດຂອງເຮົາແນວໃດ?*

ເຖິງແມ່ນວ່າພວກເຮົາຊອກສແວງຫາທີ່ຈະ "ເຮັດທຸກສິ່ງເພື່ອຖວາຍກຽດແດ່ພຣະເຈົ້າ," ພວກເຮົາຍັງສແວງຫາທີ່ຈະ "ບໍ່ໃຫ້ຄົນຢິວຫຼືຄົນກຣີກຫຼືຄຣິສຕະຈັກຂອງພຣະເຈົ້າສະດຸດໃຈ." ເວລານັ້ນຈະມາເຖິງສິ່ງໃດໆທີ່ພວກເຮົາເຮັດເພື່ອນຳເອົາການຖວາຍກຽດແກ່ພຣະເຈົ້າຈະເຮັດໃຫ້ຄົນອື່ນສະດຸດໃຈ. ເຖິງຢ່າງໃດກໍຕາມ, ການຮຽກເອີ້ນໃຫ້ຖວາຍກຽດພຣະເຈົ້າແມ່ນນ້ຳມັນທີ່ກໍ່ໃນການກະທຳທັງໝົດຂອງພວກເຮົາ.

ມັນອາດຈະເບິ່ງຄືວ່າແປກທີ່ໂປໂລເວົ້າວ່າ, "ເຮົາພະຍາຍາມເຮັດໃຫ້ທຸກຄົນພໍໃຈໃນທຸກສິ່ງທຸກຢ່າງ:" ພວກເຮົາຕ້ອງເຂົ້າໃຈໃນຄວາມປາຖນາຂອງໂປໂລທີ່ຈະເຮັດໃຫ້ທຸກຄົນພໍໃຈໃນສະພາບການທີ່ລາວເວົ້ານັ້ນ. ໂປໂລໄດ້ກ່າວເຖິງເສລີພາບທີ່ພວກເຮົາມີຢູ່ໃນພຣະຄຣິດ. ໂປໂລເຕັມໃຈປະເສລີພາບນັ້ນໄວ້ ຖ້າການກະທຳຂອງເພິ່ນອາດເຮັດໃຫ້ບາງຄົນສະດຸດໃຈ. ເພິ່ນຕ້ອງການຢາກເຮັດໃຫ້ທຸກຄົນພໍໃຈເພື່ອຊີ້ນຳທາງເຂົາໄປຫາພຣະຄຣິດ. ພວກເຮົາເຮັດໃຫ້ເປັນທີ່ພໍໃຈຂອງກະສັດເມື່ອພວກເຮົາຮັກຄົນອື່ນແບບນີ້.

ພວກເຮົາ "ເປັນທູດ "ຂອງມະຫາກະສັດ. ປະຊາກອນຂອງອານາຈັກພຣະເຈົ້າເວົ້າໃນນາມຂອງກະສັດແລະເປັນຕົວແທນຂອງຄວາມດີຂອງພຣະອົງຕໍ່ຄົນອື່ນໆ. ນັ້ນແມ່ນເຫດຜົນທີ່ພວກເຮົາເຮັດທຸກສິ່ງທຸກຢ່າງເພື່ອຖວາຍກຽດແກ່ພຣະເຈົ້າແລະພົບກັບທຸກໆຄົນໃນບ່ອນທີ່ເຂົາເຈົ້າອາສັຍຢູ່.

ພວກເຮົາອາດຈະບໍ່ໄດ້ຮັບສິດທິນີ້ສເມີໄປ. ນັ້ນແມ່ນເຫດຜົນທີ່ວ່າພຣະຄຸນຂອງພຣະເຈົ້າແມ່ນງົດງາມຫຼາຍ. ຢ່າໃຫ້ຄວາມຍິ່ງໃຫຍ່ຂອງການຮຽກເອີ້ນນີ້ຖ້ວມລົ້ນພວກທ່ານ; ພຽງແຕ່ໃຫ້ໃສ່ໃຈສິ່ງທີ່ຕ້ອງເຮັດແລະຜ່ານສາຍຕາທາງຝ່າຍຈິດວິນຍານ. ແຕ່ຈົ່ງໃຫ້ທຸກໆ

ບາດກ້າວທີ່ທ່ານກ້າວໄປໃນລັກສະນະເປັນທູດຂອງກະສັດເໜືອກະສັດ.

*ເມື່ອໃດທີ່ທ່ານໄດ້ເຫັນໃຜຜູ້ນຶ່ງເຕັມໃຈຖວາຍຂອງສ່ວນຕົວເພື່ອຢາກແບ່ງປັນຂ່າວປະເສີດ?*

## ນຳໃຊ້ໃນຊີວິດ

ໃຫ້ຄວາມຮັບຜິດຊອບຂອງທ່ານຕໍ່ກັບຄົນອື່ນຂັບເຄື່ອນວິທີທີ່ທ່ານໃຊ້ສິດທິຂອງທ່ານ. ເລືອກຂໍ້ນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງສຳລວດກວດເບິ່ງ.** ທ່ານກຳລັງເບິ່ງຮູບເງົາ, ກຳລັງຟັງເພງ, ຫຼືຕິດຕາມຊື່ມວນຊົນທີ່ເຮັດໄດ້ທຸກຢ່າງແຕ່ບໍ່ມີຜົນປໂຍດຫັຽງ? ຈົ່ງພິຈາລະນາເອົາສິ່ງເຫຼົ່ານີ້ອອກແລະທົດແທນດ້ວຍການເຮັດທຸກສິ່ງໃຫ້ເປັນທີ່ຖວາຍກຽດແກ່ພຣະເຈົ້າ.
- **ໃຫ້ຄົນອື່ນມາກ່ອນ.** ຍອມແພ້ສິ່ງທີ່ດີເພື່ອເຮັດສິ່ງທີ່ດີກ່ວາ. ພວກເຮົາມີເສລີພາບໃນເວລາສ່ວນຕົວຂອງພວກເຮົາ. ເວລານຶ່ງຊົ່ວໂມງໃນການພັກຜ່ອນໃນອາທິດນີ້ປົກກະຕິແລ້ວທ່ານຈະໃຊ້ເປັນການພັກຜ່ອນຂອງທ່ານ. ແຕ່ໃຫ້ໃຊ້ເວລານັ້ນຮັບໃຊ້ຄົນອື່ນ.
- **ມີສ່ວນຮ່ວມກັບຄົນອື່ນໆ.** ໂປໂລໄດ້ຍົກຕົວຢ່າງໃຫ້ເຫັນ ສົມມຸດວ່າຄຣິສຕຽນຈະກິນເຂົ້າຮ່ວມກັບຜູ້ທີ່ບໍ່ເຊື່ອແລະມີໂອກາດທີ່ຈະເປັນພະຍານເຖິງເຣື່ອງພຣະຄຣິດ. ເຊີນຄົນທີ່ບໍ່ຮູ້ຈັກພຣະເຈົ້າໄປກິນເຂົ້າທ່ຽງຫຼືເຂົ້າແລງ. ຈົ່ງອະທິຖານດ້ວຍຖ້ອຍຄຳທີ່ສາມາດເຂົ້າໃຈເພື່ອຕອບສະໜອງຊ່ວຍໃຫ້ຄົນທີ່ມານັ້ນໄດ້ເຫັນພຣະຄຣິດ.

ໂທຣະສັບມືຖືສາມາດເປັນປໂຍດຕໍ່ການດຳເນີນຊີວິດຂອງພວກເຮົາໃນຫຼາຍໆດ້ານ. ແຕ່ຍ້ອນວ່າໂທຣະສັບຂອງພວກເຮົາສາມາດຕິດຕໍ່ໄດ້ທຸກເວລາແຕ່ບໍ່ໄດ້ໝາຍຄວາມວ່າພວກເຮົາມີສິດທິໃນການໃຊ້ມັນທຸກເວລາແລະທຸກບ່ອນບໍ່ວ່າບ່ອນໃດກໍຕາມຖ້າພວກເຮົາຕ້ອງການ. ສິດສ່ວນບຸກຄົນຂອງພວກເຮົາສາມາດ, ແລະຕ້ອງ, ມີຄວາມສົມດູນກັບຄວາມຮັບຜິດຊອບຂອງພວກເຮົາຕໍ່ຄົນອື່ນແລະຕໍ່ອານາຈັກຂອງພຣະເຈົ້າ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**.